

# ສີມືການມັດຜ້າຍ້ອມສີໄດ້ກາຍເປັນຂົວຕໍ່ທີ່ເພີ່ມຄວາມເຂົ້າໃຈເຊິ່ງກັນ ແລະ ກັນ

“ຂ້ອຍບໍ່ເຄີຍຄິດວ່າ ຈະສາມາດດຶງດູດຄວາມສົນໃຈຈາກຊາວຕ່າງປະເທດຫຼາຍປານນີ້ ໂດຍອີງໃສ່ຄວາມສາມາດຂອງຕົນ, ຈົນວ່າມີຊາວຕ່າງປະເທດ 9 ທ່ານ ໄດ້ເດີນທາງ 8.000 ກວ່າກິໂລແມັດແລ້ວ ມາເຖິງນະຄອນຕ້າຫຼີ ທີ່ເປັນບ້ານເກີດຂອງຂ້ອຍ, ໄປສຳຜັດກັບວັດທະນະທຳຊົນເຜົ່າດັ້ງເດີມຢ່າງເລິກເຊິ່ງ.” ເມື່ອທວນຄືນປະສົບການສ້າງພາລະກິດຂອງຕົນ, ນາງ ຕ້ວນຢີຣານ (Duan Yiran) ຊົນເຜົ່າປາຍນະຄອນຕ້າຫຼີ ແຂວງຢຸນນານ ກ່າວວ່າ: “ການຍຶດໝັ້ນມາເປັນເວລາ 5 ປີ ເປັນປະສົບການທີ່ລ້ຳຄ່າທີ່ສຸດ.”

## ຂົວເຊື່ອມຕໍ່ຄົນກັບຄົນ



ນາງ ຕ້ວນຢີຣານ ໄດ້ເຕີບໃຫຍ່ຢູ່ຕາມຖະໜົນຊາວຕ່າງປະເທດ ນະຄອນຕ້າຫຼີ ກິ່ງແຂວງປົກຄອງຕົນເອງເຜົ່າປາຍ ຕ້າຫຼີ, ນາງ ມີຫຼາຍໂອກາດໄດ້ແລກປ່ຽນກັບນັກທ່ອງທ່ຽວຕ່າງປະເທດຕັ້ງແຕ່ນ້ອຍ. ພີ່ນ້ອງຂອງນາງ ໄດ້ເປີດໂຮງຍ້ອມສີຢູ່ນະຄອນຕ້າຫຼີ ເຊິ່ງໄດ້ສ້າງໂອກາດໃຫ້ແກ່ນາງໃນການສຳຜັດກັບສີມືຊົນເຜົ່າບໍ່ໜ້ອຍ.

ປີ 2015, ນາງ ຕ້ວນຢີຣານ ໄປຮຽນຂະແໜງວິຊາອອກແບບຊຸດສະແດງຢູ່ອັງກິດ ແລະ ເຄີຍໄປຝຶກງານຢູ່ໂຮງລະຄອນແຫ່ງຊາດອັງກິດ. ພາຍຫຼັງຮຽນຈົບໃນປີ 2019, ນາງ ຕ້ວນຢີຣານ ເລີ່ມເປີດຫ້ອງສະຕູດີໂອ ມັດຜ້າຍ້ອມສີ YiCrafts ຢູ່ນະຄອນຫຼວງລອນດອນຂອງອັງກິດ ແລະ ເລີ່ມເສັ້ນທາງສືບທອດສີມືການມັດຜ້າຍ້ອມສີເຜົ່າປາຍຂອງຕົນ ພາຍໃຕ້ການສົ່ງເສີມຂອງຄອບຄົວ ແລະ ຄູອາຈານ. ເພື່ອເຮັດໃຫ້ຄົນທັງຫຼາຍຮັບຮູ້ເຖິງສີມືການມັດຜ້າຍ້ອມສີເຜົ່າປາຍຫຼາຍກວ່າເກົ່າ, ນາງ ໄດ້ກັບຄືນບ້ານເກີດຂອງຕົນ, ຖ່າຍທຳສາລະຄະດີສິລະປະມັດຜ້າຍ້ອມສີເຜົ່າປາຍ ດ້ວຍຕົນເອງ. ຫຼັງຈາກນັ້ນ, ນາງ ບໍ່ພຽງແຕ່ໄດ້ເປີດຫຼັກສູດຮຽນທີ່ເປັນລະບົບທາງອອນລາຍ ແລະ ເຜີຍແຜ່ຢູ່ຕາມສື່ສັງຄົມອອນລາຍຂອງປະເທດອັງກິດເທົ່ານັ້ນ, ຫາກຍັງໄດ້ສ້າງກຸ່ມສື່ສານກັນທາງອອນລາຍ. ຫຼັງຈາກນັ້ນປີປາຍ, ຫ້ອງສະຕູດີໂອໄດ້ດຳເນີນງານເປັນປົກກະຕິ ແລະ ໄດ້ດຶງດູດລູກຄ້າຈາກປະເທດຕ່າງໆໃນໂລກ.

ທ້າຍເດືອນມີນາປີນີ້, ນາງ ຕ້ວນຢີຣານ ໄດ້ນຳພານັກສຳມະນາກອນຂອງຕົນກັບເມືອນະຄອນຕ້າຫຼີ ທີ່ເປັນບ້ານເກີດຂອງຕົນເປັນຄັ້ງທຳອິດ ແລະ ດຳເນີນການສຶກສາຄົ້ນຄວ້າເປັນເວລາ 11 ວັນ. ນັກສຳມະນາກອນເຫຼົ່ານີ້ ມາຈາກຫຼາຍປະເທດ ເຊັ່ນ: ຝຣັ່ງ, ເຢຍລະມັນ, ອັງກິດ ແລະ ອິດສະຕຣາລີ, ມີຫຼາຍຄົນເຄີຍຮຽນສິລະປະມາກ່ອນແລ້ວ.

ທ່ານ ດຽນ ໂລເກວ ຊ່າງອອກແບບຊຸດສະແດງຮູບເງົາ ແລະ ລະຄອນໂທລະພາບອັງກິດ ທີ່ເດີນທາງມາຈີນ ເປັນຄັ້ງທຳອິດ ກ່າວວ່າ: “ການຮຽນສີມືມັດຜ້າຍ້ອມສີ, ຖັກແສ່ວ ແລະ ຕຳຜ້າ ເປັນວຽກງານທີ່ສຸດຍອດທຸກຢ່າງ. ໃນນັ້ນ, ຂ້າພະເຈົ້າມັກສີມືການມັດຜ້າຍ້ອມສີຂອງເຜົ່າປາຍທີ່ສຸດ, ເປັນສີມືລຽບງ່າຍ ແຕ່ກໍສາມາດຜະລິດຜະລິດຕະພັນທີ່ສວຍສົດງົດງາມທີ່ສຸດ.” ທ່ານ ກ່າວຕື່ມວ່າ: ຕົນຮູ້ສຶກຊາບຊຶ້ງໃຈທີ່ສີມືເຫຼົ່ານີ້ຍັງມີຢູ່ນະຄອນຕ້າຫຼີ ແລະ ຫວັງວ່າ, ຊາວໜຸ່ມທັງຫຼາຍ ຈະສືບທອດສີມືເຫຼົ່ານີ້ ໄດ້ນັບມື້ນັບຫຼາຍຂຶ້ນ.

“ວັດທະນະທຳຕ້າຫຼີ ມີຫຼາກຫຼາຍສີສັນ ແລະ ມີຄວາມກົມກ່ອມ ເຮັດໃຫ້ນະຄອນຕ້າຫຼີ ເຕັມໄປດ້ວຍຄວາມຕື່ນເຕັ້ນດີໃຈ ແລະ ມີຫຼາຍເລື່ອງທີ່ມ່ວນໆເກີດຂຶ້ນຢູ່ທີ່ນີ້.” ນາງ ຕ້ວນຢີຣານ ມັກພັນລະນາຕົນເປັນຂົວຕໍ່. ນາງ ກ່າວວ່າ: “ພວກເຮົາເປັນພຽງຂົວຕໍ່ເທົ່ານັ້ນ, ແຕ່ສິ່ງທີ່ສຳຄັນກວ່ານັ້ນແມ່ນຄົນທີ່ຢູ່ສອງຟາກຝັ່ງຂອງຂົວ.” ໂດຍຜ່ານຈາກສີມືທີ່ເຕັມໄປດ້ວຍຄວາມມີສະເໜ່, ເຮັດໃຫ້ຊາວຕ່າງປະເທດ ສາມາດຮັບຮູ້ເຖິງສີໄມ້ລາຍມື ຫັດຖະກຳທີ່ມີຊີວິດຊີວາຂອງຈີນ ໃນຂະນະທີ່ເວົ້າເຖິງວັດທະນະທຳຈີນ, ຫາກບໍ່ແມ່ນມີພຽງແຕ່ຮ້ານອາຫານຈີນ ແລະ ຫໍພິພິທະພັນເທົ່ານັ້ນ ພ້ອມທັງຈະສາມາດເພີ່ມຄວາມເຂົ້າໃຈກັນ ໃນເວລາສຳຜັດກັບສີມືຫັດຖະກຳເຫຼົ່ານີ້.

ປັດຈຸບັນ, ນາງ ຕ້ວນຢີຣານ ໄດ້ຈັດຊຸດຝຶກອົບຮົມແລ້ວປະມານ 500 ຄັ້ງ ແລະ ມີນັກສຳມະນາກອນຫຼາຍກວ່າໝື່ນຄົນເຂົ້າຮ່ວມ. ນາງ ກ່າວວ່າ: “ກ່ອນຮຽນສີມືການມັດຜ້າຍ້ອມສີຂອງເຜົ່າປາຍ, ຊາວຕ່າງປະເທດຫຼາຍຄົນຍັງບໍ່ຮູ້ວ່າ ຈີນ ມີຊົນເຜົ່າສ່ວນໜ້ອຍ. ໂຮງງານມັດຜ້າຍ້ອມສີຂອງພວກເຮົາ ອາດຈະສາມາດກາຍເປັນປ່ອງຢ້ຽມໃຫ້ແກ່ຊາວຕ່າງປະເທດ ໃນການເຂົ້າໃຈວັດທະນະທຳຊົນເຜົ່າຂອງຈີນ.”

## ເນື້ອໃນເພີ່ມເຕີມ:

ສີມືການມັດຜ້າຍ້ອມສີຂອງເຜົ່າປາຍ ນະຄອນຕ້າຫຼີ ແຂວງຢຸນນານ ຈີນ ມີປະຫວັດສາດມາເປັນເວລາຍາວນານ ແລະ ມີຊື່ສຽງໂດ່ງດັງທີ່ສຸດ, ເປັນພາກສ່ວນສຳຄັນຂອງປະຫວັດສາດ ແລະ ວັດທະນະທຳເຜົ່າປາຍ. ສ່ວນຫຼາຍຈະມັດຜ້າຍ້ອມສີເປັນຮູບພູຜາປ່າໄມ້ ຫຼື ແມ່ນ້ຳລຳເຊຂອງນະຄອນຕ້າຫຼີ.

ຜ້າທີ່ໃຊ້ເຂົ້າໃນການຍ້ອມສີສ່ວນຫຼາຍ ຈະເປັນຜ້າຝ້າຍສີຂາວ ຫຼື ຜ້າຝ້າຍປະສົມປ່ານ, ຕົ້ນຕໍຈະໃຊ້ນ້ຳສີຟ້າທີ່ກັ່ນຕອງຈາກພືດທຳມະຊາດ ມາເປັນນ້ຳສີຍ້ອມ ໂດຍຜ່ານຈາກການມັດຜ້າເປັນຮູບທີ່ຕ່າງກັນ ເພື່ອຍ້ອມເປັນຮູບ ຫຼື ລວດລາຍທີ່ຕ່າງກັນ. ສາມາດເອົາຜ້າຍ້ອມສີເຫຼົ່ານີ້ ມາເຮັດເປັນເຄື່ອງໃຊ້ປະຈຳວັນຕ່າງໆ. ປີ 2006, ສີມືການມັດຜ້າຍ້ອມສີຂອງເຜົ່າປາຍ ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກວັດທະນະທຳນາມມະທຳລະດັບຊາດຂອງຈີນ.

ແຫຼ່ງຂ່າວ: ເວັບໄຊປະຊາຊົນ ຈີນ, ໜັງສືພິມລາຍວັນຢຸນນານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

## ຫ້ອງສະຕູດີໂອທີ່ແລກປ່ຽນກັບທົ່ວໂລກ

“ຂ້ອຍຫວັງວ່າ, ຂ້ອຍຈະສາມາດນຳສິ່ງເຄື່ອງຫັດຖະກຳຂອງຊົນເຜົ່າສ່ວນໜ້ອຍອື່ນໆຂອງຈີນ ໄປສູ່ຕ່າງປະເທດ ເພື່ອຊຸກຍູ້ການພັດທະນາເສດຖະກິດທ້ອງຖິ່ນ.” ຢູ່ອັງກິດ, ນາງ ຕ້ວນຢີຣານ ໄດ້ຕິດໂປສເຕີ ໂຄສະນາເຄື່ອງນຸ່ງທີ່ເຮັດດ້ວຍມືຂອງຊາວບ້ານທັງຫຼາຍຢູ່ໃນຫ້ອງສະຕູດີໂອ ຂອງຕົນ ເພື່ອຊຸກຍູ້ການສົ່ງອອກເຄື່ອງນຸ່ງຊົນເຜົ່າເຫຼົ່ານີ້ ໄປຕ່າງປະເທດ.

ນາງ ຕ້ວນຢີຣານ ມັກວາງສະແດງຜະລິດຕະພັນແບບອ້ອຍຕ້ອຍຂອງຊາວບ້ານທັງຫຼາຍ ແລະ ສົ່ງເສີມໃຫ້ລູກຄ້າອອກແບບຊຸດເຄື່ອງນຸ່ງຂອງຕົນດ້ວຍຕົນເອງ ເພື່ອເຮັດໃຫ້ເສື້ອໄນໂຍ ແລະ ໂສ້ງຂອງເຜົ່າປາຍແບບດັ້ງເດີມປະສົມເຂົ້າກັນແລ້ວກາຍເປັນເຄື່ອງນຸ່ງແຟຊັນແບບໃໝ່.

ຍີ່ຫໍ້ຊຸດເຄື່ອງນຸ່ງຂອງນາງຕ້ວນຢີຣານ ດຽວນີ້ມີຊື່ສຽງໂດ່ງດັງແລ້ວ, ທຸກເດືອນຈະມີໃບສັ່ງຊື້ 200 ຫາ 300 ໃບ. ນາງ ເວົ້າວ່າ: “ມີແມ່ຍິງ ບາງຄົນໄດ້ເອົາຊຸດເຈົ້າສາວທີ່ຕົນຕັດຫຍິບມາເປັນເວລາໜຶ່ງປີຫາສອງປີມາໃຫ້ຂ້ອຍຂາຍ ເພື່ອເປັນຄ່າຄອງຊີບ, ຂ້ອຍກໍຍິນດີຂາຍຊ່ວຍເຂົາເຈົ້າ. ຂາຍໄປຕ່າງປະເທດເປັນການສືບສານເຄື່ອງນຸ່ງ ແລະ ກໍເປັນຂະບວນການທີ່ສ້າງສາຍພົວພັນລະຫວ່າງວັດທະນະທຳຕ່າງກັນ.”

ນັກສຳມະນາກອນຜູ້ໜຶ່ງທີ່ມາຈາກປະເທດຕຣີນິແດດ ແລະ ໂຕບາໂກ ມັກຊຸດທີ່ມີຮູບຖັກແສ່ວດອກໄມ້ຫຼາຍ, ຊື້ໄປບໍ່ດົນ ກໍໄດ້ນຸ່ງຊຸດນີ້ໄປເຂົ້າຮ່ວມງານດອງຂອງເພື່ອນອິນເດຍຜູ້ໜຶ່ງ, ສີມືຖັກແສ່ວປານີດຂອງຊຸດນີ້ ໄດ້ດຶງດູດສາຍຕາຂອງຄົນທັງຫຼາຍ, ການແລກປ່ຽນວັດທະນະທຳຢູ່ໃນງານດອງທີ່ເປັນສະຖານທີ່ສຳຄັນແບບນີ້ ເຮັດໃຫ້ ນາງ ຕ້ວນຢີຣານ ຮູ້ສຶກດີໃຈທີ່ສຸດ.

ບໍ່ພຽງແຕ່ສີມືມັດຜ້າຍ້ອມສີເທົ່ານັ້ນ, ນາງ ຕ້ວນຢີຣານ ແລະ ທີມງານ ຍັງໄດ້ຄົ້ນຄວ້າພັດທະນາຫຼັກສູດກ່ຽວກັບສີມືຖັກແສ່ວ, ສີມືຍ້ອມສີແບບເກັບລາຍແຕ້ມດ້ວຍຂີ້ເຜີ້ງ, ວິທີຊຽນງາມ, ໂຄມໄຟ, ການສານໄມ້ໃຜ່ ແລະ ແກະສະຫຼັກຕົວໜັງສືເປັນຕົ້ນ. ປັດຈຸບັນ, ຫ້ອງສະຕູດີໂອ YiCrafts ໄດ້ໂຮມສູນສີມືຫັດຖະກຳດັ້ງເດີມຈີນຫຼາຍຢ່າງ. “ພວກເຮົາໄດ້ຕິດຕໍ່ຫານາຍຊ່າງຫັດຖະກຳຫຼາຍຄົນ ແລະ ສະຕູດີໂອ ຫຼາຍແຫ່ງຢູ່ແຂວງຢຸນນານ, ແຂວງກຸ້ຍໂຈ່ວ ແລະ ນະຄອນລຽງຊານແຂວງເສສວນ, ໄດ້ເຮັດວຽກງານຫຼາຍຢ່າງ ເພື່ອສະໜັບສະໜູນການພັດທະນາຂອງສີມືຫັດຖະກຳພາກຕາເວັນຕົກສ່ຽງ ໃຕ້ຂອງຈີນ.” ໃນອະນາຄົດ, ນາງ ຫວັງວ່າ: “ຂ້ອຍຢາກນຳພານາຍຊ່າງຫັດຖະກຳ ທີ່ສືບທອດສີມືບູຮານຢ່າງແທ້ຈິງນັ້ນໄປແລກປ່ຽນກັບນາຍຊ່າງຕ່າງປະເທດຢູ່ນະຄອນຫຼວງລອນດອນຂອງອັງກິດ, ໃຫ້ເຂົາເຈົ້າມີໂອກາດເຜີຍແຜ່ສິລະປະຊົນເຜົ່າທີ່ຕົນສືບທອດມາ ທີ່ໃຊ້ເວລາເກືອບຊາດໜຶ່ງສູ່ຊາວຕ່າງປະເທດ.”

ແຫຼ່ງຂ່າວ: ເວັບໄຊຢຸນນານ, App ໜັງສືພິມລາຍວັນປະຊາຊົນ ຈີນ

